**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ຫ້ອງການ

ເລກທີ 1515 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 31 ກໍລະກົດ 2026

# ແຈ້ງການ

**ເຖິງ: ບັນດາ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ໃນຂອບເຂດທົ່ວປະເທດ.**

**ເລື່ອງ: ເຊີນຊວນ ສົ່ງຜົນງານ/ຜະລິດຕະພັນເຕັກໂນໂລຊີດີຈິຕອນ ເຂົ້າຮ່ວມການແຂ່ງຂັນ Lao Digital Award ປະຈຳປີ 2026.**

- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຫ້ອງການ ກະຊວງເຕັກໂນໂລຊີ ແລະ ການສື່ສານ ສະບັບເລກທີ 116/ກຕສ, ລົງວັນທີ 23 ມັງກອນ 2026;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍ ການແຕ່ງຕັ້ງຄະນະຮັບຜິດຊອບຈັດການແຂ່ງຂັນ Lao Digital Award ປະຈຳປີ 2026 ສະບັບເລກທີ 1776/ກຕສ, ລົງວັນທີ 14 ກໍລະກົດ 2026.

ຫ້ອງການ ກະຊວງເຕັກໂນໂລຊີ ແລະ ການສື່ສານ ຂໍຖືເປັນກຽດເຊີນຊວນມາຍັງ ບັນດາ ບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງທຸກພາກສ່ວນ ໃນຂອບເຂດທົ່ວປະເທດ ທີ່ມີຜົນງານ ຫຼື ຜະລິດຕະພັນເຕັກໂນໂລຊີດີຈິຕອນ ເຂົ້າຮ່ວມການແຂ່ງຂັນ Lao Digital Award ປະຈຳປີ 2026, ພາຍໃຕ້ຄຳຂວັນ: "ຮ່ວມສ້າງສັນນະວັດຕະກຳທີ່ກ້າວໜ້າ ເພື່ອສົ່ງເສີມການຫັນເປັນດີຈິຕອນ ຂອງ ສປປ ລາວ ໃຫ້ເຂັ້ມແຂງ ແລະ ຍືນຍົງ (Driving Advanced Innovation to Promote a Resilient and Sustainable Digital Transformation in Lao PDR)", ໂດຍມີລາຍລະອຽດ ເງື່ອນໄຂ ແລະ ວິທີການສະໝັກ ດັ່ງລຸ່ມນີ້:

1) ເງື່ອນໄຂຂອງຜູ້ເຂົ້າຮ່ວມແຂ່ງຂັນ: ຕ້ອງແມ່ນບຸກຄົນ, ນິຕິບຸກຄົນ ແລະ ອົງການຈັດຕັ້ງ ຢູ່ ສປປ ລາວ.
2) ວັນເວລາ ເປີດ-ປິດ ການສະໝັກ: ນັບຕັ້ງແຕ່ມື້ປະກາດນີ້ເປັນຕົ້ນໄປ ຈົນເຖິງວັນທີ 31 ສິງຫາ 2026.
3) ວິທີການສະໝັກ ແລະ ລາຍລະອຽດຕ່າງໆ ທ່ານສາມາດ ເຂົ້າເບິ່ງໄດ້ທີ່:
   ເວັບໄຊ: www.laodigitalaward.gov.la
   ຫຼື ພົວພັນສອບຖາມຂໍ້ມູນເພີ່ມເຕີມທີ່ G-Chat/WhatsApp: 020 56395659, 020 29831565
   Facebook: Lao Digital Award, Email: laodigitalaward@mtc.gov.la

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງບັນດາທ່ານ ເພື່ອຊາບ ແລະ ຂໍເຊີນຊວນເຂົ້າຮ່ວມການແຂ່ງຂັນຕາມເງື່ອນໄຂທີ່ກຳນົດໄວ້.

**ຫົວໜ້າຫ້ອງການ**

ກະຊວງເຕັກໂນໂລຊີ ແລະ ການສື່ສານ
ຫ້ອງການ

ພອງປະເສີດ ແກ້ວສຸວັນ

ສະແກນເພື່ອສະໝັກ